ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 13848/ຍທຂ

ນະຄອນຫລວງວຽງຈັນ, ວັນທີ 26/9/2013.

# ຂໍ້ກຳນົດ
## ກ່ຽວກັບການອະນຸມັດ
## ນ້ຳໜັກລວມສູງສຸດ ຂອງລົດບັນທຸກ

- ອີງຕາມກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 24 ທັນວາ 2012;
- ອີງຕາມກົດໝາຍ ວ່າດ້ວຍທາງຫຼວງ ສະບັບເລກທີ 04/99/ສພຊ, ລົງວັນທີ 03/4/1999;
- ອີງຕາມກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012
- ອີງໃສ່ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ລັດຖະມົນຕີ ວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ກຳນົດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ກຳນົດສະບັບນີ້ ວາງລະບຽບການ ກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດຂອງລົດບັນທຸກທີ່ສັນຈອນຕາມເສັ້ນທາງບົກ ໃນ ສ ປ ປ ລາວ ໃຫ້ແທດເໝາະ ກັບສະພາບເສັ້ນທາງໃນແຕ່ລະລະດູການ, ແນໃສ່ເພື່ອປົກປັກຮັກສາເສັ້ນທາງໃຫ້ມີອາຍຸການນຳໃຊ້ຢ່າງຍາວນານ ພ້ອມທັງຫຼຸດຜ່ອນການເກີດອຸປະຕິເຫດ ແລະ ການໃຊ້ຈ່າຍງົບປະມານຂອງລັດ ໃນການບູລະນະຮັກສາເສັ້ນທາງ.

**ມາດຕາ 2. ນິຍາມ.**

ນ້ຳໜັກລວມສູງສຸດຂອງລົດບັນທຸກ ແມ່ນນ້ຳໜັກລົດເປົ່າ ບວກກັບນ້ຳໜັກສິນຄ້າທີ່ບັນທຸກ. ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ທີ່ສັນຈອນຕາມເສັ້ນທາງບົກ ໃນ ສ ປ ປ ລາວ ແມ່ນອະນຸມັດດ້ວຍນ້ຳໜັກລວມສູງສຸດຕາມຮູບລັດຕິດຊ້ອນທ້າຍ. ຍົກເວັ້ນ: ເສັ້ນທາງຫລວງແຫ່ງຊາດ ເລກ 9 (ຂົວມິດຕະພາບ II ສະຫວັນນະເຂດ - ແດນສະຫວັນ), ເສັ້ນທາງຫລວງແຫ່ງຊາດ ເລກ 3 (ຂົວມິດຕະພາບ IV ຫ້ວຍຊາຍ - ບໍ່ເຕັນ), ເສັ້ນທາງຫລວງແຫ່ງຊາດ ເລກ 4 (ແກ່ນທ້າວ ໄຊຍະບູລີ - ສາມແຍກຊຽງເງິນ).

## ໝວດທີ II
## ນ້ຳໜັກລວມສູງສຸດ ຂອງລົດບັນທຸກ.

**ມາດຕາ 3. ນ້ຳໜັກລວມສູງສຸດ ຂອງລົດບັນທຸກໃນຊ່ວງລະດູແລ້ງ.**

ໃນຊ່ວງລະດູແລ້ງ ນັບແຕ່ ວັນທີ ໜຶ່ງ ເດືອນ ທັນວາ (01/12) ຫາ ວັນທີ ສາມສິບເອັດ ເດືອນພຶດສະພາ (31/05) ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ອະນຸຍາດ ໃຫ້ ແລ່ນຕາມເສັ້ນທາງ ປະເພດຕ່າງ ໆ ເຊັ່ນ : ທາງປູແບຕົງເສີມເຫຼັກ, ທາງປູແບຕົງ ອັດສະຟານ, ທາງປູຢາງ, ທາງປູຫີນ, ທາງປູດິນແດງ, ທາງທຳມະຊາດ ອະນຸມັດດ້ວຍນ້ຳໜັກລວມສູງສຸດຕາມມາດຕາ 2 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 4. ນ້ຳໜັກລວມສູງສຸດ ຂອງລົດບັນທຸກໃນຊ່ວງລະດູຝົນ.**

ໃນຊ່ວງລະດູຝົນ ນັບແຕ່ວັນທີ່ ໜຶ່ງ ເດືອນມິຖຸນາ (01/06) ຫາ ວັນທີ ສາມສິບ ເດືອນພະຈິກ (30/11) ຂອງທຸກ ໆ ປີ ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ທີ່ແລ່ນຕາມເສັ້ນທາງປູດິນແດງ ແລະ ທາງທຳມະຊາດ ຕ້ອງຫຼຸດນ້ຳໜັກລວມສູງສຸດທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ກຳນົດສະບັບນີ້ ລົງຊາວສ່ວນຮ້ອຍ ( 20% ).

**ມາດຕາ 5. ການຫລຸດນ້ຳໜັກລວມສູງສຸດ ຕາມຍາງສະພາບ ເຕັກນິກ ຂອງລົດບັນທຸກ.**

ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ທີ່ມີເພົາເປັນປະເພດຕີນຄູ່, ຖ້າຫາກວ່າ ໄດ້ປົດຕີນຄູ່ອອກເສັ້ນໜຶ່ງ ຫຼື ເສັ້ນໃດເສັ້ນໜຶ່ງແຕກ, ຮົ່ວ, ຕ້ອງຫຼຸດນ້ຳໜັກເພົາ ແລະ ນ້ຳໜັກລວມສູງສຸດລົງ ໂດຍໃຫ້ຄິດໄລ່ນ້ຳໜັກ ຂອງເບື້ອງທີ່ປົດຕີນອອກ ຫຼື ແຕກ, ຮົ່ວ ເປັນປະເພດຕີນດ່ຽວ.

**ມາດຕາ 6. ນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກຳລັງປ້ອງກັນຊາດ -ປ້ອງກັນຄວາມສະຫງົບ ແລະ ການຂົນສົ່ງພິເສດ.**

ນ້ຳໜັກເພົາ ແລະ ນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ທີ່ແລ່ນຕາມທ້ອງຖະໜົນ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ໄດ້ລະບຸໄວ້ ຢູ່ໃນມາດຕາ 3, 4 ແລະ 5 ຂອງຂໍ້ກຳນົດສະບັບນີ້, ຍົກເວັ້ນ ກໍລະນີສຸກເສີນ.

ການຂົນສົ່ງພິເສດ ໝາຍເຖິງການຂົນສົ່ງວັດຖຸສິ່ງຂອງ ທີ່ມີຂະໜາດໃຫຍ່, ກວ້າງ, ສູງ, ຍາວ ເກີນທີ່ໄດ້ກຳນົດໄວ້ໃນມາດຕາ 7 ຢູ່ຂ້າງລຸ່ມ ຂອງຂໍ້ກຳນົດສະບັບນີ້ ຫຼື ມີນ້ຳໜັກສູງ ເຊິ່ງບໍ່ສາມາດແຍກເປັນຊິ້ນສ່ວນອອກໄດ້.

ທຸກການຂົນສົ່ງພິເສດຕ້ອງໄດ້ຮັບອະນຸຍາດຈາກ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເສຍກ່ອນ.

ການຂົນສົ່ງທັງສອງລັກສະນະຂ້າງເທິງນີ້, ໃນເມື່ອນ້ຳໜັກລວມສູງສຸດ ເກີນນ້ຳໜັກອະນຸມັດຜ່ານຂົວຕ້ອງໃຊ້ທາງເວັ້ນ. ຖ້າບໍ່ມີທາງເວັ້ນຂົວ ໃຫ້ພົວພັນນຳ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເພື່ອຫາວິທີແກ້ໄຂ.



ເລ.

## ໝວດທີ III
## ລະບຽບການຈະລາຈອນ ສໍາລັບລົດບັນທຸກ

### ມາດຕາ 7. ຄວາມກວ້າງ, ຄວາມສູງ ແລະ ຄວາມຍາວ ຂອງລົດບັນທຸກ.

ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ນອກຈາກປະຕິບັດຕາມລະບຽບການ ທີ່ໄດ້ລະບຸໄວ້ໃນມາດຕາ 3, 4 ແລະ 5 ຢູ່ຂ້າງເທິງນີ້ແລ້ວ, ໃນການຂົນສົ່ງສິນຄ້າ ຫຼື ເຄື່ອງຂອງຊະນິດຕ່າງໆ ຕ້ອງປະຕິບັດຕາມ ລະບຽບການບັນທຸກ ດັ່ງນີ້:

1. ລົດທຸກປະເພດ ອະນຸຍາດຄວາມກວ້າງ ບໍ່ເກີນ 2,50 ແມັດ;
2. ລົດທຸກປະເພດ ອະນຸຍາດຄວາມສູງ ບໍ່ເກີນ 4,50 ແມັດ; (ແຕກຈາກໜ້າທາງເຖິງຈຸດສູງສຸດຂອງສິນຄ້າ);
3. ລົດບັນທຸກດ່ຽວ (RIGID TRUCK) ຂະໜາດ 12 ລໍ້, ອະນຸຍາດໃຫ້ມີຄວາມຍາວ ບໍ່ເກີນ12,20 ແມັດ;
   ( ໃຫ້ເບິ່ງຕາມຮູບເບີ 8 )

   <u>ຍົກເວັ້ນ:</u> ລົດບັນທຸກດ່ຽວ ທີ່ມີຂະໜາດຕໍ່າກວ່າ 12 ລໍ້ ອະນຸຍາດໃຫ້ມີຄວາມຍາວສະເພາະຕາມທີ່ໂຮງງານ ຜູ້ຜະລິດໄດ້ກໍານົດ; ( ໃຫ້ເບິ່ງຕາມຮູບເບີ 1 ຫາເບີ 7 )
4. ລົດລາກ ( SEMI TRAILER TRUCK ) ອະນຸຍາດໃຫ້ມີ ຄວາມຍາວບໍ່ເກີນ 19,00 ແມັດ;
   ( ໃຫ້ເບິ່ງຕາມຮູບເບີ 9 ຫາເບີ 13 )
5. ລົດພ່ວງ (TRAILER TRUCK) ອະນຸຍາດໃຫ້ມີ ຄວາມຍາວບໍ່ເກີນ 19,00 ແມັດ;
   ( ໃຫ້ເບິ່ງຕາມຮູບເບີ 14 ຫາເບີ 17 )

### ມາດຕາ 8. ການປະຕິບັດ ລະບຽບການຈະລາຈອນ.

ຜູ້ຂັບຂີ່ລົດບັນທຸກ ທຸກຊະນິດ ແລະ ທຸກຂະໜາດ ຊຶ່ງມີນໍ້າໜັກເປົ່າ ແລະ ນໍ້າໜັກລວມເທົ່າໃດກໍ່ຕາມ ໃນເວລາສັນຈອນ ຕາມເສັ້ນທາງບົກ ຢູ່ໃນ ສ ປ ປ ລາວ ຕ້ອງປະຕິບັດ ຕາມລະບົບສັນຍານການຈະລາຈອນ ຢ່າງເຂັ້ມງວດ ໂດຍສະເພາະ ແມ່ນບັນດາ ປ້າຍສັນຍານການຈະລາຈອນ ເຊັ່ນ: ປ້າຍກໍານົດນໍ້າໜັກ ທີ່ອະນຸຍາດ ຜ່ານຂົວ - ທາງ ແລະ ປ້າຍອື່ນ ໆ.

## ໝວດທີ IV
## ການຄຸ້ມຄອງການກວດການໍ້າໜັກ

### ມາດຕາ 9. ອົງການຄຸ້ມຄອງການກວດການໍ້າໜັກລົດ.

ອົງການຄຸ້ມຄອງການກວດກາ ການຂົນສົ່ງທາງບົກ ປະກອບດ້ວຍສອງຂັ້ນດັ່ງນີ້ :

- ຂັ້ນສູນກາງ: ກະຊວງໂຍທາທິການ ແລະ ຂົນສົ່ງ
- ຂັ້ນທ້ອງຖິ່ນ: ພະແນກໂຍທາທິການ ແລະ ຂົນສົ່ງ ປະຈໍາແຂວງ ແລະ ນະຄອນຫລວງ.



ໂຄ.

**ມາດຕາ 10. ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໃນການກວດການ້ຳໜັກລົດ.**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ອອກບົດແນະນຳເພີ້ມເຕີມເພື່ອເຮັດໃຫ້ຂໍ້ກຳນົດສະບັບນີ້ມີຄວາມຈະແຈ້ງຖ້າມີຄວາມຈຳເປັນ;
2. ຕິດຕາມ ກວດກາ ແລະ ຊຸກຍູ້ ໃນການຈັດຕັ້ງປະຕິບັດຕົວຈິງຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ແລະ ນະຄອນຫລວງ.
3. ສ້າງລະບົບການຄຸ້ມຄອງ ແລະ ລະບົບການລາຍງານ ເພື່ອເຮັດໃຫ້ການກວດກາການຂົນສົ່ງມີປະສິດທິຜົນສູງ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ;
4. ສ້າງລະບົບການເກັບກຳຂໍ້ມູນ ແລະ ວິເຄາະ ເພື່ອພັດທະນາການຄຸ້ມຄອງລົດບັນທຸກໜັກ ໃຫ້ເປັນໄປຕາມມາດຖານ.

**ມາດຕາ 11. ສິດ ແລະ ໜ້າທີ່ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ແລະ ນະຄອນຫລວງ.**

1. ຈັດຕັ້ງໜ່ວຍກວດການ້ຳໜັກລົດ ຕາມຈຸດຕ່າງໆ ພາຍໃນແຂວງຂອງຕົນ;
2. ປະກອບພະນັກງານຜູ້ທີ່ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດເຂົ້າໃນໜ່ວຍກວດການ້ຳໜັກ;
3. ຄຸ້ມຄອງວັດຖຸ- ອຸປະກອນ ຮັບໃຊ້ການກວດການ້ຳໜັກ ໃຫ້ຢູ່ໃນສະພາບໃຊ້ການໄດ້ ແລະ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
4. ຄຸ້ມຄອງ ເງິນຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ໃຫ້ເປັນໄປຕາມຂໍ້ກຳນົດ ກົດລະບຽບຂອງລັດວາງອອກ;
5. ລາຍງານສະພາບ ແລະ ສະຖິຕິ ກ່ຽວກັບການຈັດຕັ້ງປະຕິບັດ ການກວດການ້ຳໜັກ ໃຫ້ກະຊວງຊາບຢ່າງເປັນປະຈຳ;
6. ຈັດຕັ້ງການເຜີຍແຜ່ ແລະ ສຶກສາອົບຮົມ ຜູ້ປະກອບການຂົນສົ່ງ ໃຫ້ເຄົາລົບຂໍ້ກຳນົດສະບັບນີ້;
7. ມີສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ.

**ມາດຕາ 12. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼືການຈັດຕັ້ງ ທີ່ເຂົ້າຮ່ວມໃນການຄຸ້ມຄອງນ້ຳໜັກບັນທຸກ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບການປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

**ມາດຕາ 13. ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດ ຕໍ່ຂໍ້ກຳນົດສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ ຫຼື ລົງໂທດທາງອາຍາ



ໃຂ

ແລ້ວແຕ່ກໍລະນີເບົາ ຫຼື ໜັກ, ນອກຈາກນີ້ຜູ້ກະທຳຜິດຍັງຈະໄດ້ຮັບໂທດເພີ່ມເຊັ່ນ: ຖືກວັດ, ຖອນໃບອະນຸຍາດຕ່າງໆ ທີ່ກ່ຽວຂ້ອງກັບການຂົນສົ່ງ, ຍຶດ ຫຼື ຮິບພາຫະນະ ທີ່ໃຊ້ເຂົ້າໃນການກະທຳຜິດ.

ຖ້າເຈົ້າໜ້າທີ່ກວດກາສົມຮູ້ຮ່ວມຄິດໃນການກະທຳຜິດຈະຖືກປະຕິບັດລະບຽບວິໃນຕາມລະບຽບລັດຖະກອນ ແລະ ຖືກດຳເນີນຄະດີຕາມລະບຽບກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ່ VI

## ບົດບັນຍັດສຸດທ້າຍ.

**ມາດຕາ 14. ການຈັດຕັ້ງປະຕິບັດ.**

ມອບໃຫ້ອົງການຄຸ້ມຄອງການກວດການ້ຳໜັກລົດ ເປັນຜູ້ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 15. ຜົນສັກສິດ.**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນ (ຂໍ້ກຳນົດ ສະບັບເລກທີ່ 849/ຄຂປກ, ລົງວັນທີ່ 05/3/2002 ແລະ ແຈ້ງການ ສະບັບເລກທີ່ 2205/ຄຂປກ, ລົງວັນທີ່ 12/6/2006), ບັນດາຂໍ້ກຳນົດ ແລະ ລະບຽບການທີ່ຂັດກັບຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການ.**

**ສົມມາດ ພົລເສນາ**

ຕາຕະລາງນ້ຳໜັກລວມສູງສຸດ ຂອງລົດບັນທຸກ ທີ່ອະນຸຍາດສັນຈອນຕາມເສັ້ນທາງບົກ ໃນ ສ ປ ປ ລາວ.

(ຍົກເວັ້ນ ເສັ້ນທາງຫລວງແຫ່ງຊາດ ເລກ 9, ເລກ 3 ແລະ ເລກ 4)

| ລ/ດ | ປະເພດລົດ | ຮູບສະແດງປະເພດລົດ | ນ້ຳໜັກລວມສູງສຸດ ທີ່ອະນຸຍາດ (ກິໂລກຣາມ) |
|---|---|---|---|
| 1 | I ລົດບັນທຸກດ່ຽວ<br>RIGID TRUCK<br>2 ເພົາ 4 ຕີນ |  | 9.500 |
| 2 | 2 ເພົາ 6 ຕີນ |  | 14.100 |
| 3 | 3 ເພົາ 6 ຕີນ |  | 16.000 |
| 4 | 3 ເພົາ 10 ຕີນ |  | 23.200 |
| 5 | 3 ເພົາ 6 ຕີນ |  | 13.500 |

| | | | |
|---|---|---|---|
| 6 | 3 ເພົາ 8 ຕີນ |  | 17.500 |
| 7 | 4 ເພົາ 8 ຕີນ |  | 20.000 |
| 8 | 4 ເພົາ 12 ຕີນ |  | 27.200 |
| 9 | II ລົດລາກ<br>SEMI-TRAILER<br>TRUCK<br>3 ເພົາ 10 ຕີນ |  | 23.200 |
| | |  | |
| 11 | 4 ເພົາ 14 ຕີນ |  | 32.300 |

| | | | |
|---|---|---|---|
| 12 | 5 ເພົາ 18 ຕີນ |  | 41.400 |
| 13 | 6 ເພົາ 22 ຕີນ |  | 49.600 |
| 14 | III ພ່ວງ<br>TRAILER<br>2 ເພົາ 4 ຕີນ |  | 14.000 |
| 15 | 2 ເພົາ 6 ຕີນ |  | 16.100 |
| 16 | 2 ເພົາ 8 ຕີນ |  | 18.200 |
| 17 | 3 ເພົາ 12 ຕີນ |  | 27.300 |